ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໜັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 061 /ທຄຕລ 2021
ນະຄອນຫຼວງວຽງຈັນ, ວັນທີ: 15 JUN 2021

# ແຈ້ງເຊີນປະມູນ

**ເຖິງ**: ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.
**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາວຽກງານກໍ່ສ້າງ-ສ້ອມແປງ ແລະ ຕົບແຕ່ງ ທຄຕລ ສຳນັກງານໃຫຍ່.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງສະເໜີລາຄາປະເມີນວຽກ ກໍ່ສ້າງ-ສ້ອມແປງ ແລະ ຕົບແຕ່ງ ຫ້ອງຄັງ ຕຶກ **D** ທຄຕລ ສຳນັກງານໃຫຍ່ (ການຮັບເໝົາໃຊ້ເວລາ ບໍ່ເກີນ 6 ເດືອນ).

**I. <u>ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:</u>**

1. **ຊອງທີ 1 (ບໍ່ປິດຊອງ) ເອກະສານດ້ານຄຸນວຸດທິ:** ກຳນົດສົ່ງຊອງເອກະສານດ້ານຄຸນວຸດທິ **ກ່ອນວັນຈັນ, ທີ 25/06/2021, ເວລາ 15:00 ໂມງ.**
   - ໃບທະບຽນວິສາຫະກິດ (ທຶນຈົດທະບຽນວິສາຫະກິດ 500 ລ້ານຂຶ້ນໄປ).
   - ໃບອະນຸຍາດດຳເນີນທຸລະກິດປີ 2019.
   - ໃບຢັ້ງຢືນການເສຍອາກອນປີ 2019.
   - ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືທາງດ້ານການຕົບແຕ່ງສຳນັກງານຫ້ອງການ ແລະ ງານລະບົບຕ່າງໆຢ່າງໜ້ອຍ 3 ໂຄງການ.
   - ບັນຊີພາຫະນະຮັບໃຊ້ວຽກ, ອຸປະກອນ, ພະນັກງານຄຸ້ມຄອງ-ວິຊາການ ຂອງບໍລິສັດ.
   - ລາຍການ BOQ ທີ່ລະບຸຍີ່ຫໍ້ສິນຄ້າ.
2. **ຊອງທີ 2 (ປິດຊອງ) ເອກະສານດ້ານລາຄາ:**
   - ໃບປະເມີນລາຄາເປັນສະກຸນເງິນກີບ ລວມອາກອນມູນຄ່າເພີ່ມ 10%.
   - ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທີ່ສະເໜີລາຄາທັງໝົດ ດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 30/08/2021) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ.
   - **ວັນສຸກ, ທີ 09/07/2021 ເວລາ 09:30 ໂມງ** ແມ່ນມື້ເປີດຊອງປະມູນຊ່ອງໜ້າກັບຄະນະກຳມະການ ທຄຕລ, ບໍລິສັດຜູ້ຮັບເໝົາຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງລາຄາທີ່ຫ້ອງປະຊຸມຊັ້ນ 3 ຕຶກ C ທຄຕລ ສຳນັກງານໃຫຍ່.
   - ລາຄາທີ່ບໍລິສັດສະເໜີມາ ຕ້ອງເປັນລາຄາທີ່ສາມາດທຳການຕົບແຕ່ງເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ກັບບໍລິສັດອື່ນ, ຖ້າຫາກບໍລິສັດມີຄວາມຈຳເປັນໃນການເຮັດສັນຍາຮັບເໝົາຊ່ວງຕໍ່ນັ້ນ ຈະຕ້ອງແຈ້ງ ແລະ ໄດ້ຮັບການເຫັນດີ ຈາກເຈົ້າຂອງໂຄງການເສຍກ່ອນ.

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໝອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

## II. <u>ເອກະສານການປະມູນ</u>

- ສາມາດສອບຖາມລາຍລະອຽດເພີ່ມເຕີມ ກ່ຽວກັບເຕັກນິກການສ້ອມແປງ ແລະ ຕົບແຕ່ງ ຈາກວັນທີ 15/06/2021 - 25/06/2021, ໃນຊ່ວງເວລາ 08:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດ ໃນການຕອບຄຳຖາມໃດໆທັງໝົດ.
- ບໍລິສັດສາມາດ ພິວພັນເອົາເອກະສານ ເລີ່ມວັນທີ: 15/06/2021 - 25/06/2021, ເວລາ 08:30 – 16:30 ໂມງ ທີ່ ທຄຕລ ສຳນັກງານໃຫຍ່ ພະແນກຫ້ອງການບໍລິຫານ-ການເງິນ, **ຄ່າທຳນຽມເອກະສານ 200.000 ກີບ/ຊຸດ,** ລາຍລະອຽດເອກະສານ ປະກອບມີດັ່ງນີ້:
  1. ໃບປະເມີນລາຄາ 1 ຊຸດ.
  2. ແບບການສ້ອມແປງ ແລະ ຕົບແຕ່ງ 1 ຊຸດ.

## III. <u>ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:</u>

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 2% ຄືນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມຈົດທະບຽນສານຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຮັບເໝົາ.

## IV. <u>ການຊຳລະແບ່ງອອກເປັນ 4 ງວດ:</u>

- **ງວດທີ 1:** ຊຳລະ 15% ຂອງມູນຄ່າທັງໝົດ ພາຍຫຼັງຜູ້ຮັບເໝົານຳວັດຖຸອຸປະກອນ, ເຄື່ອງກົນຈັກຕ່າງໆ ເຂົ້າສະໜາມ ແລະ ປະຕິບັດວຽກມີຄວາມຄືບໜ້າ 20% ຂຶ້ນໄປ ໂດຍໄດ້ຮັບການຢັ້ງຢືນຈາກຄະນະກຳມະການຕິດຕາມກວດກາ ຫຼື ຜູ້ຮັບເໝົາສາມາດປະກອບໜັງສືຄ້ຳປະກັນທະນາຄານ.
- **ງວດທີ 2:** ຊຳລະ 35% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກໄດ້ 50% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 3:** ຊຳລະ 40% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 100% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 4:** ຫັກເງິນຄ້ຳປະກັນຄຸນນະພາບໄວ້ 10% ຂອງມູນຄ່າທັງໝົດ ໃນໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**<u>ປະທານຄະນະກຳມະການປະມູນ</u>**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

ສອບຖາມລາຍລະອຽດເພີ່ມເຕີມ:
bidcommittee@bcel.com.la

ທ່ານ ເພັດສະໝອນ 7746 7722, 2222 6406 (ເຕັກນິກ)
ທ່ານ ນ. ວັນມີນາ 5933 3349 (ປະກອບເອກະສານ)